ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********◇********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 344/ຄຊກລ
ນະຄອນຫລວງວຽງຈັນ, ວັນທີ: 19 DEC 2017

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈໍາໄຕມາດ 04, 2017

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈໍາໄຕມາດ 04, 2017 ໄດ້ໄຂຂຶ້ນໃນວັນທີ 06 ເດືອນ ທັນວາ ປີ 2017, ເວລາ 08:30 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ, ຮອງຫົວໜ້າຫ້ອງການຊີ້ນໍາວຽກງານສະໜັບສະໜູນ, ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈໍານວນ: 14 ທ່ານ, ຍິງ: 04 ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ພ້ອມກັບລາຍງານການເຄື່ອນໄຫວວຽກປະຈໍາໄຕມາດ 04 ປີ 2017 ແລະ ແຜນຄາດຄະເນ ໃນໄຕມາດ 01 ປີ 2018 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ກອງປະຊຸມກຸ່ມວິຊາການ, ກອງປະຊຸມທົບທວນ ອຸປະກອນຂອງການໂຄສະນາຜົນຮ້າຍຂອງ ລບຕ, ຈັດພິມອຸປະກອນທີ່ໄດ້ຮັບຈາກກອງປະຊຸມ, ປະສານສົມທົບກັບ ກະຊວງຖະແຫຼງຂ່າວວັດທະນະທໍາ ແລະ ທ່ອງທ່ຽວ ຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ຢູ່ 5 ແຂວງ.

- ສໍາລັບ ສະຖິຕິການເກີດອຸປະຕິເຫດ ລວມທັງອຸປະຕິເຫດ ທີ່ເກີດຢູ່ແຂວງເຊກອງ ທີ່ຜ່ານມາໃນໄລຍະນີ້ໆ ລວມທັງໝົດແມ່ນ 31 ຄົນ.

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສໍາເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະ ທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 01, ປີ 2018 ໃນນີ້ ໄດ້ມີ ທ່ານຜູ້ຕາງໜ້າ ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ, ຜູ້ຕາງໜ້າກົມສື່ມວນຊົນ ກະຊວງຖະແຫຼງຂ່າວວັດທະນະທໍາ ແລະ ທ່ອງທ່ຽວ, ຜູ້ຕາງໜ້າອົງການສະຫະປະຊາຊາດ, ທ່ານຜູ້ຕາງໜ້າວິທະຍຸແຫ່ງຊາດລາວ, ທ່ານຜູ້ຕາງໜ້າສູນກາງຊາວໜຸ່ມ, ທ່ານຜູ້ຕາງໜ້າອົງການນໍ້າໃຈນັກກິລາ ປະຈໍາ ສປປ ລາວ, ທ່ານຜູ້ຕາງໜ້າໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ທ່ານຜູ້ຕາງໜ້າອົງການ Sterling, ທ່ານຜູ້ຕາງໜ້າອົງການສາກົນເພື່ອຄົນພິການ, ອົງການເກັບກູ້ລະເບີດຮາໂລເທັສ (Halo-Trust), ຜູ້ຕາງໜ້າອົງການເວີເອັກດູເຄຊັນ, ໄດ້ລາຍງານຜົນສໍາເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 04, 2017 ແລະ ແຜນວຽກປະຈໍາໄຕມາດ 01, 2018. ສ່ວນລາຍລະອຽດ ຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນ ພ້ອມດ້ວຍແຜນແມ່ນສາມາດເບິ່ງໄດ້ໃນເອກະສານ ຊ້ອນທ້າຍ.

ບ້ານສີສັງວອນ, ເມືອງໄຊເສດຖາ, ໄປສະນີ: 7261, ໂທ: (856-21) 262386, ແຟັກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:

1. ກົມສື່ມວນຊົນ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ກິດຈະກຳຂອງເຮົາໄລຍະຜ່ານມາແມ່ນໄດ້ປະຕິບັດ 4 ແຂວງ, (ແຂວງຄຳມ່ວນ, ແຂວງຈຳປາສັກ, ແຂວງເຊກອງ, ແຂວງສາລະວັນ) ຈາກນັ້ນ ຈຶ່ງເພີ່ມມາເປັນ 5 ແຂວງ ຄືເພີ່ມນະຄອນຫຼວງວຽງຈັນ ດີແທ້ຢາກສະເໜີໃຫ້ມີການໂຄສະນາ ລວມໄປເຖິງໂທລະໂຄ່ງຢູ່ຂັ້ນບ້ານນຳ.

2. ວິທະຍຸແຫ່ງຊາດລາວ: ເຖິງວ່າບາງໄລຍະພວກເຮົາບໍ່ມີທຶນສະໜັບສະໜູນ ແຕ່ພວກເຮົາກໍ່ຍັງຄົງເອົາລາຍການເກົ່າມາປັບປຸງ ແລະ ອອກລາຍການໃນບາງຄັ້ງ ຖ້າເປັນໄປໄດ້ຖ້າມີທຶນຮອນ ໃນການລົງເກັບກຳຂໍ້ມູນຕົວຈິງຢູ່ພາກສະໜາມກໍ່ຍິ່ງເປັນການດີ.

3. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ໄດ້ຮ່ວມກັບ ຄຊກລ ຈັດຝຶກອົບຮົມຢູ່ແຂວງຊຽງຂວາງ ແລະ ແຂວງຫຼວງພະບາງ, ບັນດາແຂວງຕ່າງໆແມ່ນໄດ້ຮັບແຂກຢູ່ແຂວງຈຳປາສັກ (ການວາງສະແດງກອງປະຊຸມໂຕະມົນ) ແລະໃນກາງເດືອນນີ້ ຈະມີກອງປະຊຸມປະຈຳປີຢູ່ນະຄອນຫຼວງວຽງຈັນ, ແຜນການຕໍ່ໜ້າຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຢູ່ແຂວງແມ່ນເຄື່ອນໄຫວຕາມບ້ານເປົ້າໝາຍ, ສືບຕໍ່ກິດຈະກຳກັບອົງການນ້ຳໃຈນັກກິລາ ແລະ ສືບຕໍ່ເຈລະຈາ MOA ໄລຍະ 2 ຈະໝົດເດືອນ 1 ປີ 2018, ວຽກງານກ່ຽວກັບການປັບປຸງໃນການໃຊ້ GPS ໃຫ້ທີມງານໂຄສະນາ, ປັບປຸງວຽກງານວິຊາສະເພາະເຊັ່ນການຫຼິ້ນເກມ, ລະຄອນຕຸກກະຕາ, ວິທີການ ແລະ ປັບປຸງເນື້ອໃນ.

4. ສູນກາງຊາວໜຸ່ມສະເໜີ ຢາກໃຫ້ສູນກາງຊາວໜຸ່ມ ມີສ່ວນຮ່ວມໃນກິດຈະກຳ ສຳລັບແຜນກິດຈະກຳໄດ້ເຮັດຄາວໆໄວ້ແລ້ວ.

5. ອົງການສາກົນເພື່ອຄົນພິການ (HI) ພື້ນທີ່ໃນການປະຕິບັດວຽກໃນປີ 2017 ເມືອງວິລະບູລີ 18 ບ້ານ, ເມືອງເຊໂປນ 27 ບ້ານ, ເມືອງພີນ 20 ບ້ານ, ເມືອງນອງ 18 ບ້ານ, ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດໃນໄຕມາດ 4 ປີ 2017 ລົງໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ປະເມີນກິດຈະກຳໄລຍະທ້າຍຂອງກິດຈະກຳສຶກສາຄວາມສ່ຽງໄພໃນຂັ້ນໂຮງຮຽນ ແລະ ຂັ້ນບ້ານ (KAP Survey and TOT PIA).

- ຜົນຂອງການປະເມີນ TOT ແລະ KAP Survey ໂຄງການສຶກສາຄວາມສ່ຽງນີ້ ປະຈຸບັນແມ່ນທີ່ປຶກສາກຳລັງຂຽນບົດລາຍງານ ຄາດຄະເນອາດຈະໄດ້ຮັບຜົນໃນເດືອນ 12 ນີ້ ແລະ ເພື່ອເປັນການປັບປຸງແຜນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ແລະ ເປັນບົດຮຽນໃນອານາຄົດ.

- ການມອບເບີສາຍດ່ວນໃຫ້ກັບອົງການຮາໂລທຣາສ ເປັນຜູ້ດຳເນີນຕໍ່ໃນການຮັບສາຍການລາຍງານ ລູກລະເບີດຈາກປະຊາຊົນໃນ 4 ຕົວເມືອງນີ້ເນື່ອງຈາກວ່າອົງການສາກົນເພື່ອຄົນພິການຈະໄດ້ຍ້າຍພື້ນທີ່ໃນການດຳເນີນກິດຈະກຳຂອງໂຄງການໃນແຂວງຫົວພັນ.

- ແຜນກິດຈະກຳ ເດືອນ ມັງກອນ ຫາ ເດືອນ ມີນາ ປີ 2018 ກະກຽມການຈັດສິ່ງເຄື່ອງໄປຫົວເມືອງ ແຂວງຫົວພັນ ແລະ ຕິດຕັ້ງ ສະຖານທີ່, ດຳເນີນກິດຈະກຳການປະເມີນກ່ອນ KAP Survey ໃນບ້ານເປົ້າໝາຍຂອງເມືອງຫົວເມືອງ ແຂວງຫົວພັນ.

6 . ອົງການ Halo trust ກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃນເວລາເຮັດກິດຈະກຳແລ້ວປະຊາຊົນລາຍງານ ຫລື ເດັກນັກຮຽນລາຍງານແມ່ນເຮົາບັກທຶກຂໍ້ມູນການລາຍງານລະເບີດໃສ່ແບບຟອມແລ້ວກອບປີ້ສົ່ງໃຫ້ຝ່າຍປະຕິບັດງານລະເບີດ, ມອບແຜ່ນ poster ໃຫ້ບ້ານ ເຮັດໂຄສະນາເປີດບ້ານໃໝ່, ລົງປະເມີນຄວາມເຂົ້າໃຈຂອງປະຊາຊົນຕໍ່ກິດຈະກຳ 3 ຄັ້ງຕໍ່ເດືອນ ຖ້າມີປະຊາຊົນລາຍງານເຫັນລະເບີດທີມງານຈົດບັນທຶກໃສ່ແບບຟອມແລ້ວສົ່ງໃຫ້ຝ່າຍປະຕິບັດງານ.

- ບັນຫາ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກຳຕົວຈິງ ໃນໄລຍະຜ່ານມາແມ່ນຍາມລະດູຝົນເຮັດໃຫ້ທີມງານຂອງພວກເຮົາມີ ຄວາມຫຍຸ້ງຍາກໃນການເດີນທາງທີ່ຈະເຂົ້າໄປຫາບ້ານເປົ້າໝາຍ ແລະ ລະດູເກັບກ່ຽວຂອງປະຊາຊົນອອກໄປໄຮ່ໄປນາ ແຕ່ເຊົ້າ, ເຊິ່ງເຮັດໃຫ້ການເຂົ້າຮ່ວມກິດຈະກຳໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ມີໜ້ອຍຄົນ, ບາງບ້ານຍັງບໍ່ໃຫ້ການຮ່ວມມືດີເທົ່າທີ່ຄວນ, ປະຊາຊົນບາງຄົນຍັງບໍ່ຢາກລາຍງານລະເບີດທີ່ພົບ

ເຫັນໃຫ້ທາງທີມງານ.

7. ອົງການນ້ຳໃນນັກກິລາ (SOS) ຈັດກອງປະຊຸມສະເໜີໂຄງການ ຮຽນຮູ້ເລື່ອງ ລບຕ ໂດຍຜ່ານກິລາບານເຕະ ທີ່ແຂວງຊຽງຂວາງ ໄລຍະ 3 ສົມທົບກັບ ກົມພະລະ ແລະ ສິນລະປະສຶກສາທິການ ແລະ ກິລາ ທີ່ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ.

- ແຜນກິດຈະກຳສືບຕໍ່ຮຽນຮູ້ ເລື່ອງ ລບຕ ໂດຍຜ່ານກິລາບານເຕະ ທີ່ ເມືອງພູກູດ, ເມືອງຄຳ ແລະ ເມືອງ ໜອງແຮດ ຄາດຄະເນ ລວມຈຳນວນໂຮງຮຽນ ທັງໝົດ 45 ແຫ່ງ.

- ໃນໄຕມາດ 1 ປີ 2018 ຈະມີການຕິດຕາມ ປະເມີນຜົນໂຄງການຢູ່ແຂວງສາລະວັນ ສະເໜີຫາ ຄຊກລ ເອົາເຂົ້າແຜນ ແລະ ພວກເຮົາຈະສົ່ງບັດເຊີນມາ.

8. ອົງການເອີນເອັກດູເຄຊັນ ອົງຕາມ ແຜນປີ 2017 ມີ 12 ກິດຈະກຳ ເຮົາປະຕິບັດໄປແລ້ວ 10 ກິດຈະກຳຍັງ 2 ກິດຈະກຳອີກ 1 ກິດຈະກຳກຳລັງຈະດຳເນີນ, ແຕ່ອີກ 1 ກິດຈະກຳບໍ່ສາມາດສືບຕໍ່ໄດ້ເພາະຈະໝົດ MOU ເດືອນ 12 ປະຕິບັດໄດ້90%, ຂອງງົບປະມານ, ກິດຈະກຳຈະຈັດກອງປະຊຸມຢູ່ວັງວຽງເປັນກອງປະຊຸມຂັ້ນສຸດທ້າຍຂອງການປິດໂຄງການຢາກໃຫ້ໜ່ວຍງານ MRE ສະເໜີນະໂຍບາຍຂອງລັດຖະບານວຽກງານ MRE ໃນກອງປະຊຸມ.

ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:

1. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ມີແຜນຈະປັບປຸງພັດທະນາ ເພີ່ມທະວີສົມທົບການສ້າງອາສາສະໝັກບ້ານ, ເພີ່ມສື່ໂຄສະນາ ຖືວ່າເປັນການດີ ຄວນມີການປັບປຸງ ຕາມສະພາບຄວາມເປັນຈິງ ແລະ ຈຸດປະສົງຂອງຜູ້ໃຫ້ທຶນ.
2. ສະເໜີໃຫ້ໜ່ວຍງານ MRE ຮ່າງໜັງສືສະເໜີຫາກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອຂໍຂໍ້ມູນລາຍຊື່ໂຮງຮຽນເປົ້າໝາຍ 9 ແຂວງ.
3. ສຳລັບການປິດໂຄງການຂອງ HI ຢູ່ແຂວງສະຫວັນນະເຂດ ສະເໜີອົງການສາກົນເພື່ອຄົນພິການ (HI) ມອບໂອນເຄື່ອງໃນ MOU ສະບັບເກົ່າໃຫ້ລັດຖະບານກ່ອນ, ຈາກນັ້ນຈຶ່ງພັດທະນາສະບັບໃໝ່ຢູ່ແຂວງຫົວພັນ.
4. ສະເໜີໃຫ້ອົງການຮາໂລທຣາສ ຜະລິດອຸປະກອນແຈກຢາຍເພີ່ມຕື່ມ ຂໍໃຫ້ພິມເສື້ອ, ປຶ້ມຂຽນ, ສໍດຳ ແຈກຢາຍໃສ່ໂລໂກອົງການ ແລະ ເອົາມາຜ່ານຫ້ອງການ ຄຊກລກ່ອນການຈັດພິມ.
5. ສະເໜີທາງ Sterling ພິຈາລະນາງົບປະມານເຂົ້າໃນວຽກງານໂຄສະນາເພີ່ມເຕີມເປັນຕົ້ນແມ່ນອາສາສະໝັກບ້ານ, ລາຍການວິທະຍຸ.

❖ <u>ໝາຍເຫດ</u>: ສຳລັບລາຍລະອຽດຂອງການເຄື່ອນໄຫວກິດຈະກຳ ແລະ ແຜນການເຄື່ອນໄຫວເຮັດວຽກໃນໄຕມາດ ຕໍ່ໄປ ແລະ ແຜນວຽກໃນໄຕມາດ 01, 2018 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຂັດຕິດ.

ປະທານກອງປະຊຸມ

ຫ້ອງການ ຄຊກລ

ບຸນເພັງ ສີສະຫວັດ

Mr.Bounpheng SISAWATH

ບັນທຶກກອງປະຊຸມໂດຍ: